# ສັນຍາ ກ່ຽວກັບການຄວບຄຸມ ພະຍາດລະບາດຕາມ ຊາຍແດນ
# ລະຫ່ວາງ
# ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ແລະ
# ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ລັດຖະບານແຫ່ງປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດສັງຄົມນິຍົມວຽດນາມ " ທັງສອງຝ່າຍ ", ບົນພື້ນຖານຄວາມເປັນເອກະລາດ, ອະທິປະໄຕແລະຄວາມສະເໝີພາບຂອງແຕ່ລະປະເທດ, ແລະເພື່ອຮັບປະກັນສຸກຂະພາບທີ່ດີຕາມຊາຍແດນ, ການແລກປ່ຽນຊາຍແດນ, ຮັບປະກັນສຸກຂະພາບຂອງປະຊາຊົນ ແລະ ເພື່ອກັນການລະບາດຂອງພະຍາດຈາກປະເທດນຶ່ງໄປຫາປະເທດນຶ່ງ, ໄດ້ຕົກລົງເຫັນດີນຳກັນ ດັ່ງຕໍ່ໄປນີ້ :

## ພາກທີ່ນຶ່ງ:
## ບົດບັນຍັດທົ່ວໄປ

ມາດຕາ 1:

ການຄວບຄຸມພະຍາດລະບາດຕາມຊາຍແດນແມ່ນມາດຕະການທາງດ້ານການແພດເພື່ອສະກັດ-ດັກພະຍາດທີ່ສາມາດຄວບຄຸມໄດ້, ພະຍາດຊຶມເຊື້ອຕ່າງໆທີ່ມີການແຜ່ລາມຈາກ ສາທາລະນາລັດສັງຄົມນິຍົມ ຫວຽດນາມ ເຂົ້າມາໃນ ສາທາລະນາລັດປະຊາທິປະໄຕປະຊາຊົນລາວ ແລະ ໃນທາງກົງກັນຂ້າມ.

ມາດຕາ 2:

ການປະຕິບັດໃນການຄວບຄຸມພະຍາດລະບາດຕາມຊາຍແດນ ລະຫ່ວາງສອງປະເທດດັ່ງກ່າວ, ໂດຍອີງຕາມການເຫັນດີເຫັນພ້ອມກັບເນື້ອໃນແລະເງື່ອນໄຂຂອງກົດໝາຍວ່າດ້ວຍການຄວບຄຸມສຸກຂະພາບລະຫ່ວາງຊາດ ຂອງອົງການອານາໄມໂລກ ແລະບົດສັນຍາສະບັບນີ້ ຈະຕ້ອງຮັບຜິດຊອບສູງຕໍ່ໜ້າກົດໝາຍຂອງແຕ່ລະປະເທດແລະຂໍ້ກຳນົດດ້ານການຄວບຄຸມພະຍາດລະບາດຕາມຊາຍແດນ,

ມາດຕາ 3:

ໜ່ວຍປະຕິບັດການຄວບຄຸມພະຍາດລະບາດຕາມຊາຍແດນ ລະຫ່ວາງສອງປະເທດດັ່ງກ່າວ, ໂດຍອີງຕາມສະພາບຄວາມເປັນຈິງ ຕາມຂົງເຂດຊາຍແດນ ແລະອີງຕາມການເຫັນດີເຫັນພ້ອມກັບເນື້ອໃນເງື່ອນໄຂຂອງບົດສັນຍາສະບັບນີ້ ຈະຕ້ອງມີການປຶກສາຫາລື, ຕົກລົງ ແລະ ຮ່າງຂໍ້ກຳນົດໃນບັນຫາຕ່າງໆຢ່າງລະອຽດ ເພື່ອຈະຈັດຕັ້ງປະຕິບັດບົດສັນຍາສະບັບນີ້.

ມາດຕາ 4:

ບັນດາພະຍາດທີ່ຈະຕ້ອງໄດ້ຄວບຄຸມຮ່ວມກັນນັ້ນມີຄື ພະຍາດອະຫິວາ, ພະຍາດ ກາລະໂລກ ຫລືພະຍາດຊຶ້ມເຊື້ອທີ່ຮ້າຍແຮງ ອື່ນໆ ດັ່ງທີ່ ສອງກະຊວງສາທາລະນະສຸກໄດ້ຕົກລົງກັນເຫັນດີຮ່ວມມືນຳກັນ.

ບັນດາພະຍາດທີ່ຈະຕ້ອງໄດ້ຕິດຕາມຮ່ວມກັນນັ້ນແມ່ນ ພະຍາດຊືມເຊື້ອຕ່າງໆ ດັ່ງທີ່ ສອງກະຊວງສາທາລະນະສຸກໄດ້ຕົກລົງກັນເຫັນດີຮ່ວມມືນຳກັນ.

ມາດຕາ 5:

ຂົງເຂດຂອງ ການຄວບຄຸມພະຍາດລະບາດຕາມຊາຍແດນ ແມ່ນ ບ່ອນຈຸດຊາຍແດນທີ່ມີດ່ານເຂົ້າ-ອອກ ຜ່ານໄປມາຫາກັນ ໂດຍທາງນໍ້າ, ທາງອາກາດ ຫລື ທາງບົກ.

ມາດຕາ 6:

ບັນດາເປົ້າໝາຍທີ່ກ່ຽວກັບການຄວບຄຸມພະຍາດລະບາດຕາມຊາຍແດນ ນັ້ນມີຄົນ, ພາຫະນະຂົນສົ່ງ ລວມເຖິງ ວັດຖຸສິ່ງຂອງ, ກະເປົາເດີນທາງ, ສາງເຄື່ອງ, ຫີບຫໍ່ ແລະ ອື່ນໆ ທີ່ອາດສາມາດຕິດເຊື້ອ ຫລື ເປັນພາຫະນຳເຊື້ອພະຍາດ ໃນເວລາເຂົ້າ-ອອກ, ຂົນສົ່ງສິນຄ້າເຂົ້າ-ອອກ, ຈາກເຂດທີ່ມີການລະບາດຂອງພະຍາດຕິດຕໍ່ຕາມຊາຍແດນ.

## ພາກທີ່ ສອງ
## ວິທີການ ທີ່ຈະນຳມາໃຊ້ກັບການຄວບຄຸມພະຍາດລະບາດຕາມຊາຍແດນ

ມາດຕາ 7:

ການຄວບຄຸມພະຍາດລະບາດຕາມເສັ້ນທາງຂົນສົ່ງທາງອາກາດແມ່ນການຄວຄຸມພະຍາດຢູ່ຕາມສະ ໜາມບິນ:

1. ກວດກາໜັງສື ຕາມແບບຟອມຂອງໜ່ວຍສະກັດ-ດັກພະຍາດຊາຍແດນ ແລະ ເອກະສານອື່ນໆທີ່ພົວພັນກັນ, ຖ້າມີຄວາມຈຳເປັນກໍ່ສາມາດສອບຖາມເພີ້ມເຕີມໄດ້.

2. ກວດກາສຸຂະພາບຜູ້ໂດຍສານ ແລະພະນັກງານປະຈຳເຄື່ອງບິນ ຢູ່ດ່ານເຂົ້າ-ອອກ ດ້ວຍການສັງເກດ ສະພາບຮ່າງກາຍຂອງຜູ້ໂດຍສານ ເພື່ອຄົ້ນຫາອາການທີ່ສະແດງຕໍ່ການແຜ່ເຊື້ອ, ບັນດາ ເຮືອບິນບັນທຸກກໍ່ປະຕິບັດເຊັ່ນດຽວກັນເພື່ອຄົ້ນຫາພາຫະນຳເຊື້ອ ຫລື ຕົວນຳເຊື້ອພະຍາດ.
3. ເມື່ອຫາກກວດພົບເຫັນກັບບຸກຄົນໃດ, ກັບວັດຖຸສິ່ງຂອງອັນໃດ ຫລື ເຮືອບິນລຳໃດ ທີ່ມີອາການເປັນພະຍາດ, ມີພາຫະນຳເຊື້ອ ຫລື ຕົວນຳເຊື້ອພະຍາດທີ່ຈະຕ້ອງຄວບຄຸມ ໜ່ວຍສະກັດ-ດັກ

ພະຍາດຊາຍແດນ ມີໜ້າທີ່ກວດກາ ແລະກວດວິເຄາະທາງການແພດຢ່າງລະອຽດເພື່ອບົ່ງມະຕິພະຍາດດັ່ງກ່າວ.

ມາດຕາ 8:

ການຄວບຄຸມພະຍາດລະບາດຕາມເສັ້ນທາງຂົນສົ່ງທາງນໍ້າ (ເຮືອບັນທຸກສິ່ງຂອງ, ເຮືອໂດຍສານ) ໃນເວລາຜ່ານດ່ານຂາເຂົ້າ-ຂາອອກ:

1. ກວດກາໜັງສື ຕາມແບບຟອມຂອງໜ່ວຍສະກັດ-ດັກພະຍາດຊາຍແດນ ແລະ ເອກະສານອື່ນໆທີ່ພົວພັນກັນ, ຖ້າມີຄວາມຈໍາເປັນກໍ່ສາມາດສອບຖາມເພີ້ມເຕີມໄດ້.

2. ກວດກາສຸຂະພາບຜູ້ໂດຍສານ ແລະພະນັກງານປະຈໍາເຮືອ ຢູ່ດ່ານທ່າເຮືອເຂົ້າ-ອອກ ດ້ວຍການສັງເກດສະພາບຮ່າງກາຍຂອງຜູ້ໂດຍສານເພື່ອຄົ້ນຫາອາການທີ່ສະແດງຕໍ່ການແຜ່ເຊື້ອ, ບັນດາເຮືອ, ເຮືອບັນທຸກກໍ່ປະຕິບັດເຊັ່ນດຽວກັນເພື່ອຄົ້ນຫາພາຫະນໍາເຊື້ອ ຫລື ຕົວນໍາເຊື້ອພະຍາດ.

3. ເມື່ອຫາກກວດພົບເຫັນກັບບຸກຄົນໃດ, ກັບວັດຖຸສິ່ງຂອງອັນໃດ ຫລື ເຮືອລໍາໃດ ທີ່ມີອາການເປັນພະຍາດ, ມີພາຫະນໍາເຊື້ອ ຫລື ຕົວນໍາເຊື້ອພະຍາດທີ່ຈະຕ້ອງຄວບຄຸມ ໜ່ວຍສະກັດ-ດັກພະຍາດຊາຍແດນ ມີໜ້າທີ່ກວດກາ ແລະກວດວິເຄາະທາງການແພດຢ່າງລະອຽດເພື່ອບົ່ງມະຕິພະຍາດດັ່ງກ່າວ.

ມາດຕາ 9:

ການຄວບຄຸມພະຍາດລະບາດຕາມເສັ້ນທາງຂົນສົ່ງທາງບົກ ທາງລົດ ແລະ ທາງລົດໄຟ:

1. ກວດກາໜັງສື ຕາມແບບຟອມຂອງໜ່ວຍສະກັດ-ດັກພະຍາດຊາຍແດນ ແລະ ເອກະສານອື່ນໆທີ່ພົວພັນກັນ, ຖ້າມີຄວາມຈໍາເປັນກໍ່ສາມາດສອບຖາມເພີ້ມເຕີມໄດ້.

2. ກວດກາສຸຂະພາບຂອງຜູ້ໂດຍສານ ແລະພະນັກງານປະຈໍາລົດ ຢູ່ດ່ານເຂົ້າ-ອອກ ດ້ວຍການສັງເກດສະພາບຮ່າງກາຍຂອງຜູ້ໂດຍສານ ເພື່ອຄົ້ນຫາອານການທີ່ສະແດງຕໍ່ການແຜ່ເຊື້ອ, ບັນດາລົດ, ລົດບັນທຸກກໍ່ປະຕິບັດເຊັ່ນດຽວກັນເພື່ອຄົ້ນຫາພາຫະນໍາເຊື້ອ ຫລື ຕົວນໍາເຊື້ອພະຍາດ.

3. ເມື່ອຫາກກວດພົບເຫັນກັບບຸກຄົນໃດ, ກັບວັດຖຸສິ່ງຂອງອັນໃດ ຫລື ລົດຄັນໃດ ທີ່ມີອາການເປັນພະຍາດ, ມີພາຫະນໍາເຊື້ອ ຫລື ຕົວນໍາເຊື້ອພະຍາດທີ່ຈະຕ້ອງຄວບຄຸມ ໜ່ວຍສະກັດ-ດັກພະຍາດຊາຍແດນ ມີໜ້າທີ່ກວດກາ ແລະກວດວິເຄາະທາງການແພດຢ່າງລະອຽດເພື່ອບົ່ງມະຕິພະຍາດດັ່ງກ່າວ.

ມາດຕາ 10:

ໃນເວລາກວດກາທາງການແພດ, ຖ້າຫາກກວດພົບເຫັນພະຍາດທີ່ຈະຕ້ອງສະກັດ-ດັກ ນຳບຸກຄົນໃດ, ຫລື ແຫ່ລງພະຍາດ ຫລື ພາຫະນຳເຊື້ອ, ຕົວນຳເຊື້ອໃນພາຫະນະຂົນສົ່ງ ໜ່ວຍງານສະກັດ-ດັກ ການແຜ່ເຊື້ອພະຍາດນີ້ ມີໜ້າທີ່ສະກັດ-ດັກ ພະຍາດຕາມຫລັກການ ທາງດ້ານ ການແພດ ເພື່ອທຳລາຍເຊື້ອຈຸລິນຊີ, ພາຫະນຳເຊື້ອ, ອຸປະກອນທີ່ຕິດພະຍາດ ໂດຍໃຫ້ຊອດຄ່ອງກັບລະບຽບກົດໝາຍ ແລະຂໍ້ກຳນົດ ກ່ຽວກັບການຄວບຄຸມ, ການແຜ່ເຊື້ອພະຍາດຂອງແຕ່ລະປະເທດ.

ມາດຕາ 11:

ເພີ້ມຈາກວິທີການທີ່ໄດ້ລະບຸໃນ ມາດຕາ 7, 8 ແລະ 9 ຂອງສັນຍາສະບັບນີ້, ໜ່ວຍສະກັດ-ດັກພະຍາດລະບາດຂອງທັງສອງປະເທດ ສາມາດປະຕິບັດກິດຈະກຳສະກັດ-ດັກພະຍາດ ຢູ່ຕະລາດຊາຍແດນ ຫລື ປະຕິບັດຕາມຈຸດທີ່ໄດ້ຮັບອານຸຍາດເປີດ ຕາມບົດສັນຍາ ຂອງ ລັດຖະບານທັງສອງຝ່າຍ.

ມາດຕາ 12:

ໃນຊ່ວງໄລຍະຢູ່ໃນການເດີນທາງ,ບຸກຄົນທີ່ມີໃບຢັ້ງຢືນສຸກຂະພາບຈາກໜ່ວຍສະກັດ-ດັກພະຍາດຈາກປະເທດນຶ່ງແລ້ວບຸກຄົນຜູ້ນັ້ນ/ສິ່ງຂອງອັນນັ້ນຈະບໍ່ເປັນເປົ້າໝາຍຂອງໜ່ວຍສະກັດ-ດັກພະຍາດຈາກປະເທດທີ່ເດີນທາງໄປ ແລະການການກວດຄົ້ນຫາການນຳເຊື້ອພະຍາດ ຫລື ຕົວນຳເຊື້ອກໍ່ຈະບໍ່ໄດ້ປະຕິບັດ.

## ພາກທີ່ ສາມ
## ການຮ່ວມມື ທາງດ້ານເຕັກນິກວິຊາການ

ມາດຕາ 13:

ການເຫັນດີເຫັນພ້ອມກັບບັນດາມາດຕາທີ່ຢູ່ຂ້າງເທິງນີ້, ໜ່ວຍສະກັດ-ດັກພະຍາດຂອງທັງສອງປະເທດຈະຕ້ອງໄດ້ແລກປ່ຽນຂໍ້ມູນຂ່າວສານໃນປັດຈຸບັນ ຫລື ເປັນຂໍ້ມູນຂ່າວສານໃໝ່ໆທີ່ທາງການໄດ້ປະກາດໃຊ້ເປັນລະບຽບກົດໝາຍໃຫ້ກັນແລະກັນຢ່າງເປັນປົກກະຕິ. ທັງສອງພາກສ່ວນຈະຕ້ອງໄດ້ເຕືອນໃຫ້ຊຶ່ງກັນແລະກັນຮູ້ກ່ຽວກັບສະພາບບັນດາພະຍາດທີ່ຈະຕ້ອງຄວບຄຸມ ແລະພະຍາດຊຶມເຊື້ອອື່ນໆ ເພື່ອສົ່ງເສີມທາແຮງການຊ່ວຍເຫລືອ, ການແລກປ່ຽນ ແລະການຮ່ວມມືທາງດ້ານການຄວບຄຸມພະຍາດລະບາດຕາມຊາຍແດນ. ທັງສອງພາກສ່ວນດັ່ງກ່າວ ຈະຕ້ອງຈັດການປະຊຸມ

ແຕ່ລະປີ ເພື່ອທວນຄືນການປະຕິບັດບົດສັນຍານີ້, ປຶກສາຫາລືການແກ້ໄຂຂໍ້ຫຍຸ້ງຍາກເພື່ອໃຫ້ການຄວບຄຸມພະຍາດລະບາດຕາມຊາຍແດນດີຂຶ້ນກ່ວາເກົ່າ.

ມາດຕາ 14:

ການຈັດຕັ້ງ ໜ່ວຍງານສະກັດ-ດັກພະຍາດຂອງທັງສອງປະເທດ, ຕ້ອງອີງຕາມ ຄວາມຮຽກຮ້ອງ ຕົວຈິງ, ເພື່ອຮ່ວມມືກັນໃນການປະຕິບັດທາງດ້ານເຕັກນິກວິຊາການຄວບຄຸມເຊື້ອພະຍາດ, ໃນການນຳເຂົ້າແລະສົ່ງອອກດ້ານຢາ ແລະ ສານເຄມີຕ່າງໆໃນວຽກງານການຄວບຄຸມພະຍາດລະບາດຕາມຊາຍແດນ, ທັງສອງຝ່າຍອາດຈະແລກປ່ຽນຄະນະນັກຊ່ຽວຊານກ່ຽວກັບ ການຄວບຄຸມພະຍາດລະບາດຕາມຊາຍແດນ, ພະນັກງານວິຊາການເພື່ອເຮັດການສຳຫລວດ ແລະ/ຫລື ໄປທັດສະນະສຶກສາເພື່ອຍົກຄຸນນະພາບແລະຄວາມສາມາດຂອງພະນັກງານຄວບຄຸມພະຍາດລະບາດຕາມຊາຍແດນ ຂອງແຕ່ລະປະເທດ.

## ພາກທີ່ ສີ່
## ບົດມ້ວນທ້າຍ

ມາດຕາ 15:

ສັນຍາສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນຮ່ວມກັນ ແລະ ມີອາຍຸການເຖິງຫ້າປີ. ຫົກເດືອນກ່ອນໝົດອາຍຸສັນຍາສະບັບນີ້ຖ້າຫາກບໍ່ມີຝ່າຍໃດສະເໜີເຈດຈຳນົງຢາກ ຢຸດຕິປະຕິບັດສັນຍາຖືວ່າສັນຍາສະບັບນີ້ຈະມີອາຍຸຂະຫຍາຍອອກໄປຕື່ມອີກຫ້າປີຢ່າງອັດຕາໂນມັດເປັນຕົ້ນ. ໃນໄລຍະປະຕິບັດສັນຍາສະບັບນີ້ຖ້າຫາກມີບັນຫາໃດເກີດຂຶ້ນ, ແລະ ມີຂໍ້ສະ ເໜີຈາກຝ່າຍໃດຝ່າຍນຶ່ງສັນຍາສະບັບນີ້ສາມາດທົບທວນຄືນໄດ້ໃໝ່ໂດຍມີການຕົກລົງເຫັນດີເປັນລາຍລັກອັກສອນຂອງທັງສອງ ຝ່າຍ.

ເຮັດທີ່ ນະຄອນເວ້, ສາທາລະນະລັດສັງຄົມນິຍົມ ຫວຽດນາມ, ວັນທີ 21 ທັນວາ 2001 ເປັນສອງສະບັບຕົ້ນ ພາສາລາວ, ພາສາຫວຽດນາມ, ທັງສອງສະບັບລ້ວນແຕ່ມີຄຸນຄ່າເທົ່າທຽມກັນ.

| | |
|---|---|
| ຕາງໜ້າລັດຖະບານ ແຫ່ງ ສປປ ລາວ | ຕາງໜ້າລັດຖະບານແຫ່ງ ສສ ຫວຽດນາມ |
| ລັດຖະມົນຕີວ່າການກະຊວງສາທາລະນະສຸກ | ລັດຖະມົນຕີວ່າການກະຊວງສາທາລະນະສຸກ |
| ດຣ ປອນເມັກ ດາລາລອຍ | ສາດສະດາຈານ ດຣ ໂດ ທຽນ ເພືອງ |